ແຜນງານບິດວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR









# Ministry of Education and Sports marks International Children's Day with a focus on child protection and continued promotion of safeguarding guidance for educators

## Media Report

**29 May to 9 June 2025**

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ ຕາງໜ້າໃຫ້ລັດຖະບານອົດສະຕຣາລີ
Basic Education Quality and Access in Lao PDR is managed by Tetra Tech International Development on behalf of the Australian Government.

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2025-05-30 | Newspaper | Pasaxon | Front and Page 9 |
| 2025-05-30 | Newspaper | Pathedlao | Page 4 |
| 2025-06-02 | Newspaper | Public Security | Front and Page 11 |
| 2025-06-02 | Newspaper | Vientiane Times | Page 4 |
| 2025-06-05 | Newspaper | Army | Page 11 |
| 2025-06-09 | Newspaper | Vientiane Mai | Page 2 |
| 2025-05-29 | Social media | Economic and Commerce Facebook | 607K Followers |
| 2025-05-29 | Social media | Vientiane Radio FM 105.5 Facebook | 84K Followers |
| 2025-05-29 | Social media | Lao Security News Facebook | 146K Followers |
| 2025-05-29 | Social media | Vientiane Mai Facebook | 4.8K Followers |
| 2025-05-29 | Social media | Army Radio FM 99.7 Facebook | 27K Followers |
| 2025-05-29 | Social media | Pasaxon Facebook | 30K Followers |
| 2025-05-29 | Social media | Pathedlao Facebook | 389K Followers |
| 2025-05-29 | Social media | Lao National Radio FM 103.7 Facebook | 171K Followers |
| 2025-05-29 | Social media | Lao Star TV | 984K Followers |
| 2025-05-29 | Social media | Lao People's Army News Facebook | 137K Followers |
| 2025-05-29 | Social media | Lao PSTV Facebook | 250K Followers |
| 2025-05-30 | Social media | Lao Youth FM 90.00 MHZ Facebook | 678K Followers |
| 2025-05-30 | Social media | Edu-Sport Daily News Facebook | 12K Followers |
| 2025-05-30 | Social media | Edu-Sport TV Online Facebook | 73K Followers |
| 2025-05-30 | Social media | VTE 9 Facebook | 622K Followers |
| 2025-06-02 | Social media | Information Media Centre Facebook | 11K Followers |
| 2025-06-04 | Social media | Lao National Television-Englsih Program | 65K Followers |
| 2025-05-29 | Website | KPL English | Read article in English here |
| 2025-05-30 | Website | BEQUAL | Read article in English here |
| 2025-06-02 | Website | Vientiane Times | |
| 2025-05-29 | Radio | Army Radio FM 99.7 | |
| 2025-05-29 | Radio | Public Security Radio FM 101.5 | |
| 2025-05-29 | Radio | Lao Youth FM 90.00 MHZ | |
| 2025-05-29 | Radio | Lao National Radio FM 103.7 | |
| 2025-05-29 | Radio | Vientiane Radio FM 105.5 | |
| 2025-05-31 | Radio | Education news FM 103.7 MHZ | |

| | | | |
|---|---|---|---|
| 2025-05-29 | TV | Lao Star TV | Watch TV news here<br>At time 15:17 |
| 2025-05-30 | TV | Lao ESTV | Watch TV news here |
| 2025-05-30 | TV | VTE 9 | Watch TV news here |
| 2025-05-30 | TV | Lao Army TV | No Link |
| 2025-06-04 | TV | Lao National TV – English program | Watch TV news here |
| 2025-06-04 | TV | Lao PSTV | Watch TV news here |
| 2025-06-08 | TV | Lao Star TV | Watch TV news here |
| 2025-06-03 | WhatsApp | MT-PT WhatsApp and FB groups | 19 groups with trainers<br>+/- 713 members |
| 2025-06-03 | WhatsApp | PESS-DESB | 18 Provincial groups<br>426 members |
| 2025-06-03 | WhatsApp | Pre-Service Writing team | 8 TTCs and 2 universities<br>73 members |
| 2025-06-03 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2025-06-03 | WhatsApp | Target TTC | Key coordinators from the 3 target TTCs 17 members |
| 2025-06-03 | WhatsApp | IPS | in targeted provinces-LNT, XKH, SVK- 8 Districts in XKH, 12 Districts |
| 2025-06-03 | WhatsApp | Teaching Standard Review group | MT-PT- 28 members |

## Pictures of articles in the media

| | | | |
|---|---|---|---|
| **2025-05-30** | **Newspaper** | **Pasaxon** | **Front and Page 9** |



ປະຊາຊົນ

ວັນສຸກ 30 ພຶດສະພາ 2025

ປີທີ 74 ສະບັບທີ 14,736

ສຽງຂອງສູນກາງພັກ ປະຊາຊົນ ປະຕິວັດລາວ

# ກະຊວງ ສສກ ຮ່ວມກັບສະຖານທູດອິສຕຣາລີ ສະຫຼອງວັນເດັກສາກົນ

ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບ ສະຖານທູດອິສຕຣາລີ ປະຈຳ ສປປ ລາວ ໄດ້ຈັດພິທີສະເຫຼີມສະຫຼອງວັນເດັກສາກົນ ຂຶ້ນໃນວັນທີ 29 ພຶດສະພານີ້, ທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ພິທີດັ່ງກ່າວຈັດຄຽງຄູ່ກັບກິດຈະກຳເຜີຍແຜ່ເອກະສານ ແລະ ຄຳຂວັນວັນເດັກສາກົນປີ 2025 ຄື: ການສ້າງຄວາມເຂັ້ມແຂງໃຫ້ກັບເດັກທຸກຄົນ, ສິດເທົ່າທຽມກັນ, ອະນາຄົດທີ່ປອດໄພ ໂດຍການເປັນປະທານຂອງທ່ານ ສຸພາບ ຄູນວິໄຊ ຮອງຫົວໜ້າຫ້ອງການກະຊວງສຶກສາທິການ ແລະກິລາ, ມີບັນດາທ່ານຜູ້ຕາງໜ້າຈາກພະແນກການກະຊວງສຶກສາທິການ ແລະ ກິລາ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງ ສສກ, ພ້ອມດ້ວຍຄູ-ອາຈານ ແລະ ນັກຮຽນເຂົ້າຮ່ວມ.

ໃນພິທີ ຜູ້ເຂົ້າຮ່ວມໄດ້ຮັບຟັງການອ່ານສານອວຍພອນວັນເດັກສາກົນຂອງທ່ານນາຍົກລັດຖະມົນຕີ ໂດຍໄດ້ຍົກໃຫ້ເຫັນເຖິງການພັດທະນາບັນດານິຕິກຳໃນໄລຍະຜ່ານມາ ຊຶ່ງເປັນບາດກ້າວທີ່ສຳຄັນ ສຳລັບສິດທິເດັກໃນ ສປປ ລາວ ຄື: ການຫ້າມລົງໂທດທາງຮ່າງກາຍຢ່າງຄົບຊຸດ, ໄດ້ຮັບຮອງເອົາໃນວັນທີ 30 ເມສາ 2024.

ຕໍ່ໜ້າ 9

ຂ່າວ

1. ຮ່ວມແຮງຮ່ວ

2. ປະທານ ໄຮ່

### ກະຊວງ ສສກ... (ຈາກໜ້າ...1)

ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບປັບປຸງນີ້ ໄດ້ກຳນົດໃຫ້ ສປປ ລາວ ເປັນປະເທດທີ 66 ແລະ ເປັນປະເທດທຳອິດໃນໃນອາຊຽນທີ່ຫ້າມການລົງໂທດທຸກຮູບແບບລວມທັງຢູ່ເຮືອນແລະໂຮງຮຽນ. ຖະແຫຼງການໄດ້ຢືນຢັນຄືນຄຳໝັ້ນສັນຍາຂອງແຕ່ລະປະເທດໃນການສ້າງສະພາບແວດລ້ອມທີ່ປອດໄພ, ສົ່ງເສີມສິດທິຂອງເດັກທຸກຄົນ. ເພື່ອແນໃສ່ຊຸກຍູ້ການປົກປ້ອງເດັກໃນດ້ານການສຶກສາ. ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານປະເທດອິສຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ ໂດຍແຜນງານບີຄວາ

ທ່ານ ສຸພາບ ຄູນວິໄຊ ໄດ້ມີຄຳເຫັນແລະຮຽກຮ້ອງໃຫ້ຄູສອນທຸກຄົນ ໃຫ້ບຸລິມະສິດການປົກປ້ອງເດັກ ແລະ ໂຄສະນາຢ່າງຈິງຈັງ ເພື່ອຄວາມປອດໄພຂອງນັກຮຽນ ການປົກປ້ອງເດັກແມ່ນຄວາມຮັບຜິດຊອບຂອງທຸກຄົນ. ພວກເຮົາຫວັງວ່າບັນດາຄຳແນະນຳດ້ານການປົກປ້ອງນີ້ຈະສືບຕໍ່ຖືກນຳໃຊ້ຢ່າງກວ້າງຂວາງໂດຍຄູສອນ ແລະ ທຸກຄົນທີ່ເຮັດວຽກກັບເດັກເພື່ອສ້າງສະພາບແວດລ້ອມໃນໂຮງຮຽນທີ່ປອດໄພ ແລະ ມີສ່ວນຮ່ວມ. ລະບົບການສຶກສາ.

ໃນຕອນບ່າຍວັນດຽວກັນ, ນັກຮຽນໄດ້ໄປຢ້ຽມຢາມຄະນະວິສະວະກຳສາດ, ຊຶ່ງນັກຮຽນຈະໄດ້ຮັບແຮງບັນດານໃຈໃນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ, ຄະນິດສາດ (STEM) ສຳລັບເດັກຍິງແລະເດັກຊາຍ. ນີ້ເປັນສິ່ງສຳຄັນໂດຍສະເພາະສຳລັບເດັກຍິງ, ແມ່ຍິງໃນຂະແໜງການSTEM ຖືວ່າຍັງມີອັດຕາຕ່ຳກວ່າຊາຍຢູ່ໃນທົ່ວໂລກ. (ຂ່າວ: ຍຸພິນທອງ)

| | | | |
|---|---|---|---|
| **2025-05-30** | **Newspaper** | **Pathedlao** | **Page 4** |



ປະເທດລາວ 4

# ສສກ ສະເຫຼີມສະຫຼອງວັນເດັກສາກົນ ຄົບຮອບ 100 ປີ

| 2025-06-02 | Newspaper | Public Security | Front and Page 11 |
|---|---|---|---|



ສະຫຼອງວັນເດັກນ້ອຍສາກົນ ເນັ້ນຫົວຂໍ້
"ການປົກປ້ອງເດັກ ແລະ ສືບຕໍ່ຊຸກຍູ້ການແນະນຳວຽກງານການປົກປ້ອງເດັກ ໃຫ້ແກ່ຄູ-ອາຈານ ແລະ ຜູ້ບໍລິຫານການສຶກສາ"



ສະຫຼອງວັນ...

| 2025-06-02 | Newspaper | Vientiane Times | Page 4 |
|---|---|---|---|



Children experience the excitement of virtual reality, combining fun with exposure to cutting-edge technology, during International Children's Day activities in Vientiane on May 28. The event, held at the Research Institute for Educational Sciences and supported by Australia through the BEQUAL programme, promotes child protection in education under the theme "Empowering Every Child: Equal Rights, Safe Futures".

| 2025-05-29 | Economic and Commerce Facebook |
|---|---|




| 2025-05-29 | Vientiane Radio FM 105.5 Facebook |
|---|---|



| 2025-05-29 | Army Radio FM 99.7 Facebook |
| --- | --- |

**ວິທະຍຸກະຈາຍສຽງກອງທັບປະຊາຊົນລາວ FM 99,7 MHz**
Yesterday at 3:00 PM ·

ກະຊວງສຶກສາທິການ ແລະ ກິລາ ສະເຫຼີມສະຫຼອງວັນເດັກສາກົນ
*******************************************************

ວັນທີ 29 ພຶດສະພາ 2025, ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ໄດ້ຈັດພິທີສະເຫຼີມສະຫຼອງວັນເດັກສາກົນ ເພື່ອແນໃສ່ຊຸກຍູ້ການປົກປ້ອງເດັກໃນດ້ານການສຶກສາ. ງານດັ່ງກ່າວໄດ້ຈັດຂຶ້ນທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ. ໂດຍການເປັນປະທານ ຂອງທ່ານ ສຸພາບ ຄູນວິໄຊ, ຮອງຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ, ມີບັນດາທ່ານຜູ້ຕາງໜ້າຈາກພະແນກການກະຊວງສຶກສາທິການ ແລະ ກິລາ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ, ພ້ອມດ້ວຍຄູ-ອາຈານ ແລະ ນ້ອງນັກຮຽນຈາກໂຮງຮຽນປະຖົມ ແລະ ມັດທະຍົມເຂົ້າຮ່ວມ ຈຳນວນ 100 ກວ່າຄົນເຂົ້າຮ່ວມ.

ພິທີດັ່ງກ່າວຈະຈັດຄຽງຄູ່ກັບກິດຈະກຳເຜີຍແຜ່ເອກະສານ ແລະ ຄຳຂວັນວັນເດັກສາກົນປີ 2025 ທີ່ວ່າ " ການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກທຸກຄົນ: ສິດເທົ່າທຽມກັນ, ອະນາຄົດທີ່ປອດໄພ." ເຊິ່ງມອບໃຫ້ພະແນກເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໃນນາມກອງເລຂາ ຂອງຄະນະກຳມາທິການຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານການຊີ້ນຳຂອງຄະນະລັດຖະມົນຕີ.

ໃນພິທີຍັງໄດ້ອ່ານສານອວຍພອນວັນເດັກສາກົນຂອງທ່ານ ນາຍົກລັດຖະມົນຕີ ເນື້ອໃນໄດ້ຍົກໃຫ້ເຫັນເຖິງການພັດທະນາບັນດານິຕິກຳໃນໄລຍະຜ່ານມາ ເຊິ່ງເປັນບາດກ້າວທີ່ສຳຄັນສຳລັບສິດທິເດັກໃນ ສປປ ລາວ ຄື: ການຫ້າມລົງໂທດທາງຮ່າງກາຍຢ່າງຄົບຊຸດ, ໄດ້ຮັບຮອງເອົາໃນວັນທີ 30 ເມສາ 2024. ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບປັບປຸງນີ້ ໄດ້ກຳນົດໃຫ້ ສປປ ລາວ ເປັນປະເທດທີ 66 ຂອງການລົງໂທດຢ່າງຄົບຊຸດໃນໂລກ, ລວມທັງການລົງໂທດທັງໝົດໃນອາຊຽນ; ບ້ານເຮືອນ ແລະ ໂຮງຮຽນ. ຖະແຫຼງການໄດ້ຢືນຢັນຄືນຄຳໝັ້ນສັນຍາຂອງແຕ່ລະປະເທດໃນການສ້າງສະພາບແວດລ້ອມທີ່ປອດໄພ, ສົ່ງເສີມສິດທິຂອງເດັກທຸກຄົນ.

ຈາກນັ້ນ, ພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໄດ້ເຜີຍແຜ່ເອກະສານແນະນຳການປົກປ້ອງ ແລະ ຮັກສາຄວາມປອດໄພ ສຳລັບເດັກໃນຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ, ເຊິ່ງໄດ້ຈັດພິມໂດຍ ກະຊວງສຶກສາທິການ ແລະ ກິລາ ໃນປີ 2024 ໂດຍໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກລັດຖະບານປະເທດອົດສະຕຣາລີ.

ໃນໂອກາດນີ້, ທີມງານຄູຝຶກຂອງກະຊວງສຶກສາທິການ ແລະ ກິລາ ເຜີຍແຜ່ ແລະ ຈັດລາວະຝຶກອົບຮົມ ໂດຍສຸມໃສ່ການປະຕິບັດຕົວຈິງຂອງການປົກປ້ອງເດັກໃນບໍລິເວນໂຮງຮຽນ ເຊັ່ນ: ການສື່ສານທີ່ມີຄວາມເຄົາລົບກັບເດັກນ້ອຍ, ການນຳໃຊ້ສື່ເອເລັກໂຕຣນິກຢ່າງມີຄວາມຮັບຜິດຊອບ ແລະ ປອດໄພ ແລະ ການຄຸ້ມຄອງພຶດຕິກຳໃນທາງບວກ. ຜູ້ເຂົ້າຮ່ວມຍັງໄດ້ຄົ້ນຄວ້າບັນດາພຶດຕິກຳທີ່ເໝາະສົມ ແລະ ບໍ່ເໝາະສົມກ່ຽວກັບການປົກປ້ອງເດັກ, ລວມທັງບັນຫາທີ່ກ່ຽວຂ້ອງກັບການຂູດຮີດທາງເພດ, ການລ່ວງລະເມີດ ແລະ ອານາຈານ, ລວມທັງການຖ່າຍພາບ ແລະ ການຖ່າຍຮູບເດັກນ້ອຍ ແລະ ການນຳໃຊ້ທາດເຫຼົ້າ ແລະ ສິ່ງເສບຕິດ. ການຝຶກອົບຮົມຄັ້ງນີ້ແມ່ນໄດ້ຮັບການຮ່ວມມືເປັນຢ່າງດີ ແລະ ໄດ້ຮັບຜົນສຳເລັດໂດຍການມີສ່ວນຮ່ວມຂອງທຸກພາກສ່ວນ.

ໃນຕອນບ່າຍຂອງວັນດຽວກັນ, ນ້ອງນັກຮຽນ ຍັງໄດ້ໄປຢ້ຽມຢາມຄະນະວິສະວະກຳສາດ, ເຊິ່ງນັກຮຽນຈະໄດ້ຮັບແຮງບັນດານໃຈໃນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ, ຄະນິດສາດ (STEM) ສຳລັບເດັກຍິງ ແລະ ເດັກຊາຍ. ນີ້ເປັນສິ່ງສຳຄັນໂດຍສະເພາະສຳລັບເດັກຍິງ, ແມ່ຍິງໃນຂະແໜງການ STEM ຖືວ່າຍັງມີອັດຕາຕ່ຳກວ່າຊາຍຢູ່ໃນທົ່ວໂລກ.

ໃນຕອນທ້າຍຂອງກອງປະຊຸມ ທ່ານ ສຸພາພາບ ຄູນວິໄຊ ໄດ້ຮຽກຮ້ອງໃຫ້ຄູສອນທຸກຄົນຈົ່ງໃຫ້ບຸລິມະສິດການປົກປ້ອງເດັກ ແລະ ໂຄສະນາເຜີຍແຜ່ຢ່າງຈິງຈັງເພື່ອຄວາມປອດໄພຂອງນັກຮຽນ “ການປົກປ້ອງເດັກແມ່ນຄວາມຮັບຜິດຊອບຂອງທຸກຄົນ”.




You, Tik Chandaraphone, ວິທະຍຸກະຈາຍສຽງກອງທັບປະຊາຊົນລາວ FM 99,7 MHz and 8 others

Like · Comment · Share

| 2025-05-29 | Pasaxon Facebook |
| --- | --- |

**ປະຊາຊົນ**
Yesterday at 3:17 PM ·

ກະຊວງ ສສກ ຮ່ວມກັບສະຖານທູດອົສຕຣາລີ ສະຫຼອງວັນເດັກສາກົນ
.........
ກະຊວງສຶກສາທິການ ແລະ ກິລາ(ສສກ)ຮ່ວມກັບສະຖານທູດອົສຕຣາລີ ປະຈຳ ສປປ ລາວໄດ້ຈັດພິທີສະເຫຼີມສະຫຼອງວັນເດັກສາກົນ ຂຶ້ນໃນວັນທີ 29 ພຶດສະພາ ນີ້ ທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ພິທີດັ່ງກ່າວຈັດຄຽງຄູ່ກັບກິດຈະກຳເຜີຍແຜ່ເອກະສານ ແລະ ຄຳຂວັນວັນເດັກສາກົນປີ 2025 ຄື:ການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກທຸກຄົນ: ສິດເທົ່າທຽມກັນ, ອະນາຄົດທີ່ປອດໄພ.ໂດຍການເປັນປະທານ ຂອງທ່ານ ສຸພາບ ຄູນວິໄຊ ຮອງຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ, ມີບັນດາທ່ານຜູ້ຕາງໜ້າຈາກພະແນກການກະຊວງສຶກສາທິການ ແລະ ກິລາ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງ ສສກ, ພ້ອມດ້ວຍຄູ-ອາຈານ ແລະ ນັກຮຽນເຂົ້າຮ່ວມ.
ໃນພິທີ, ຜູ້ເຂົ້າຮ່ວມໄດ້ຮັບຟັງການອ່ານສານອວຍພອນວັນເດັກສາກົນຂອງທ່ານນາຍົກລັດຖະມົນຕີ ໂດຍໄດ້ຍົກໃຫ້ເຫັນເຖິງການພັດທະນາບັນດານິຕິກຳໃນໄລຍະຜ່ານມາຊຶ່ງເປັນບາດກ້າວທີ່ສຳຄັນສຳລັບສິດທິເດັກໃນ ສປປ ລາວ ຄື: ການຫ້າມລົງໂທດທາງຮ່າງກາຍຢ່າງຄົບຊຸດ, ໄດ້ຮັບຮອງເອົາໃນວັນທີ 30 ເມສາ 2024 ແລະ ມີຜົນບັງຄັບໃຊ້ໃນປີ 2023. ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບປັບປຸງ ໄດ້ກຳນົດໃຫ້ ສປປ ລາວ ເປັນປະເທດທີ 66 ຂອງການທີ່ຫ້າມການລົງໂທດທຸກຮູບແບບ ລວມທັງ ຢູ່ເຮືອນ ແລະ ໂຮງຮຽນ. ຖະແຫຼງການໄດ້ຢືນຢັນຄືນຄຳໝັ້ນສັນຍາຂອງແຕ່ລະປະເທດໃນການສ້າງສະພາບແວດລ້ອມທີ່ປອດໄພ, ສົ່ງເສີມສິດທິຂອງເດັກທຸກຄົນ, ລວມທັງການລົງໂທດທັງໝົດໃນອາຊຽນ; ບ້ານເຮືອນແລະໂຮງຮຽນ. ຖະແຫຼງການໄດ້ຢືນຢັນຄືນຄຳໝັ້ນສັນຍາຂອງແຕ່ລະປະເທດໃນການສ້າງສະພາບແວດລ້ອມທີ່ປອດໄພ, ສົ່ງເສີມສິດທິຂອງເດັກທຸກຄົນ.ເພື່ອແນໃສ່ຊຸກຍູ້ການປົກປ້ອງເດັກໃນດ້ານການສຶກສາ. ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານປະເທດອົສຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ ໂດຍແຜນງານບີຄວາ
ທ່ານ ສຸພາບ ຄູນວິໄຊໄດ້ມີຄຳເຫັນແລະຮຽກຮ້ອງໃຫ້ຄູສອນທຸກຄົນໃຫ້ບຸລິມະສິດການປົກປ້ອງເດັກ ແລະ ໂຄສະນາຢ່າງຈິງຈັງເພື່ອຄວາມປອດໄພຂອງນັກຮຽນ ການປົກປ້ອງເດັກແມ່ນຄວາມຮັບຜິດຊອບຂອງທຸກຄົນ. ພວກເຮົາຫວັງວ່າບັນດາຄຳແນະນຳດ້ານການປົກປ້ອງນີ້ຈະສືບຕໍ່ຖືກນຳໃຊ້ຢ່າງກວ້າງຂວາງໂດຍຄູສອນ ແລະ ທຸກຄົນທີ່ເຮັດວຽກກັບເດັກເພື່ອສ້າງສະພາບແວດລ້ອມໃນໂຮງຮຽນທີ່ປອດໄພ ແລະ ມີສ່ວນຮ່ວມ..
ໃນຕອນບ່າຍວັນດຽວກັນ, ນັກຮຽນໄດ້ໄປຢ້ຽມຢາມຄະນະວິສະວະກຳສາດຊຶ່ງນັກຮຽນຈະໄດ້ຮັບແຮງບັນດານໃຈໃນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ, ຄະນິດສາດ (STEM) ສຳລັບເດັກຍິງແລະເດັກຊາຍ. ນີ້ເປັນສິ່ງສຳຄັນໂດຍສະເພາະສຳລັບເດັກຍິງ, ແມ່ຍິງໃນຂະແໜງການ STEM ຖືວ່າຍັງມີອັດຕາຕ່ຳກວ່າຜູ້ຊາຍຢູ່ໃນທົ່ວໂລກ.
ຂ່າວ-ພາບ: ຍຸພິນທອງ



You and 14 others · 1 share

Like · Comment · Share

| 2025-05-29 | Pathedlao Facebook |
|---|---|

ປະເທດລາວ Pathedlao
Yesterday at 1:57 PM ·

ສສກ ສະເຫລີມສະຫລອງ ວັນເດັກສາກົນ ຄົບຮອບ 100 ປີ

ຂປລ. ກະຊວງສຶກສາທິການ ແລະ ກິລາ (ສສກ) ຈັດພິທີສະເຫລີມສະຫລອງ ວັນເດັກສາກົນ ຄົບຮອບ 100 ປີ ໃນຫົວຂໍ້: ການປົກປ້ອງເດັກ ແລະ ສືບຕໍ່ຊຸກຍູ້ການແນະນໍາວຽກງານການປົກປ້ອງເດັກ ໃຫ້ຄູອາຈານ ແລະ ຜູ້ບໍລິຫານການສຶກສາ ໃນວັນທີ 29 ພຶດສະພາ 2025 ຢູ່ນະຄອນຫລວງວຽງຈັນ ແນໃສ່ຊຸກຍູ້ການປົກປ້ອງເດັກ ໃນດ້ານການສຶກສາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະ ບານ ອົດສະຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບ ການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ບີຄວາ).
ໃນພິທີ, ທ່ານ ສຸພາບ ຄູນວິໄຊ ຮອງຫົວໜ້າຫ້ອງການ ກະຊວງສຶກສາທິການ ແລະ ກິລາ ໄດ້ອ່ານສານອວຍພອນວັນເດັກສາກົນ ຂອງທ່ານນາຍົກລັດຖະມົນຕີ ໂດຍຍົກໃຫ້ເຫັນເຖິງການພັດທະນາ ບັນດານິຕິກໍາໃນໄລຍະຜ່ານມາ ເຊິ່ງເປັນບາດກ້າວທີ່ສໍາຄັນສໍາລັບສິດທິເດັກໃນ ສປປ ລາວ ຄື: ການຫ້າມລົງໂທດທາງຮ່າງກາຍຢ່າງຄົບຊຸດ, ໄດ້ຮັບຮອງເອົາໃນວັນທີ 30 ເມສາ 2024. ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບປັບປຸງນີ້ ໄດ້ກໍານົດໃຫ້ ສປປ ລາວ ເປັນປະເທດທີ 66 ແລະ ເປັນປະເທດທໍາອິດໃນອາຊຽນ ທີ່ຫ້າມການລົງໂທດທຸກຮູບແບບ ລວມທັງ ຢູ່ເຮືອນ ແລະ ໂຮງຮຽນ. ຖະແຫລງການໄດ້ຢືນຢັນຄືນຄໍາໝັ້ນສັນຍາຂອງແຕ່ລະປະເທດໃນການສ້າງສະພາບແວດລ້ອມທີ່ປອດໄພ ແລະ ສົ່ງເສີມສິດທິຂອງເດັກທຸກຄົນ. ພ້ອມນີ້, ຍັງໄດ້ເຜີຍແຜ່ເອກະສານແນະນໍາກ່ຽວກັບການປົກປ້ອງເດັກ ແລະ ຮັກສາຄວາມປອດໄພ ສໍາລັບເດັກ ໃນຂະ ແໜງການສຶກສາ, ວິທະຍາສາດ ແລະ ກິລາ ໃຫ້ແກ່ຄູ-ອາຈານ, ຜູ້ບໍລິຫານການສຶກສາ ແລະ ນ້ອງນັກ ຮຽນ ທີ່ມາຈາກໂຮງຮຽນປະຖົມ ແລະ ມັດທະຍົມໃນນະຄອນຫລວງວຽງຈັນ ຕື່ມອີກ.
ທ່ານ ສຸພາບ ຄູນວິໄຊ ໄດ້ເນັ້ນເຖິງບົດບາດສໍາຄັນຂອງຄູ ໃນການສ້າງສະພາບແວດລ້ອມ ການຮຽນຮູ້ທີ່ປອດໄພ ເຊິ່ງເອກະສານແນະນໍາການປົກປ້ອງ ແລະ ຮັກສາຄວາມປອດໄພ ສໍາລັບເດັກ ແມ່ນໝາກຜົນຂອງການຮ່ວມມືຂອງລັດຖະບານ ສປປ ລາວ ແລະ ອົດສະຕຣາລີ, ຄູສອນມີບົດບາດສໍາຄັນໃນການປົກປ້ອງເດັກໂດຍກົງ ພ້ອມທັງສະໜັບສະໜູນ ແລະ ສົ່ງຄວາມຮູ້ໃຫ້ແກ່ເດັກ. ພ້ອມນີ້, ການ ຈັດຕັ້ງປະຕິບັດ ເອກະສານແນະນໍາດັ່ງກ່າວ ຈະນໍາໄປສູ່ການປ່ຽນແປງພຶດຕິກໍາໃນທາງບວກ ເປັນການສ້າງສະຖານທີ່ ທີ່ປອດໄພ ສໍາລັບນັກຮຽນທີ່ຈະຮຽນຮູ້ ແລະ ຈະເລີນເຕີບໂຕ ໂດຍສະເພາະ ການສື່ ສານທີ່ມີຄວາມເຄົາລົບກັບເດັກນ້ອຍ, ການນໍາໃຊ້ສື່ເອເລັກໂຕຣນິກຢ່າງມີຄວາມຮັບຜິດຊອບ ແລະ ປອດໄພ ແລະ ການຄຸ້ມຄອງພຶດຕິກໍາໃນທາງບວກ.
ໂອກາດນີ້, ທ່ານ ສຸພາພາບ ຄູນວິໄຊ ຍັງໄດ້ຮຽກຮ້ອງໃຫ້ຄູ-ອາຈານທຸກຄົນ ໃຫ້ບຸລິມະສິດໃນການປົກປ້ອງເດັກ ແລະ ໂຄສະນາຢ່າງຈິງຈັງ ເພື່ອຄວາມປອດໄພຂອງນັກຮຽນ, ການປົກປ້ອງເດັກ ແມ່ນຄວາມຮັບຜິດຊອບຂອງທຸກຄົນ ແລະ ຫວັງວ່າ ບັນດາຄໍາແນະນໍາ ດ້ານການປົກປ້ອງນີ້ ຈະສືບຕໍ່ຖືກນໍາໃຊ້ຢ່າງກວ້າງຂວາງ ໂດຍຄູສອນ ແລະ ທຸກຄົນທີ່ເຮັດວຽກກ່ຽວກັບເດັກ ເພື່ອສ້າງສະພາບແວດລ້ອມ ໃນໂຮງຮຽນທີ່ປອດໄພ ແລະ ມີສ່ວນຮ່ວມ.



You and 4 others

Like · Comment · Share

| 2025-05-29 | Lao National Radio FM 103.7 Facebook |
|---|---|

Lao National Radio
20h ·

ສສກ ສະເຫລີມສະຫລອງ ວັນເດັກສາກົນ ຄົບຮອບ 100 ປີ ໃນຫົວຂໍ້: ການປົກປ້ອງເດັກ ແລະ ສືບຕໍ່ຊຸກຍູ້ການແນະນໍາວຽກງານການປົກປ້ອງເດັກ ໃຫ້ຄູອາຈານ ແລະ ຜູ້ບໍລິຫານການສຶກສາ.

ກະຊວງສຶກສາທິການ ແລະ ກິລາ (ສສກ) ຈັດພິທີສະເຫລີມສະຫລອງ ວັນເດັກສາກົນ ຄົບຮອບ 100 ປີ ໃນຫົວຂໍ້: ການປົກປ້ອງເດັກ ແລະ ສືບຕໍ່ຊຸກຍູ້ການແນະນໍາວຽກງານການປົກປ້ອງເດັກ ໃຫ້ຄູອາຈານ ແລະ ຜູ້ບໍລິຫານການສຶກສາ ໃນວັນທີ 29 ພຶດສະພາ 2025 ຢູ່ນະຄອນຫລວງວຽງຈັນ ແນໃສ່ຊຸກຍູ້ການປົກປ້ອງເດັກ ໃນດ້ານການສຶກສາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ ( ບີຄວາ ).
ໃນພິທີ, ທ່ານ ສຸພາບ ຄູນວິໄຊ ຮອງຫົວໜ້າຫ້ອງການ ກະຊວງສຶກສາທິການ ແລະ ກິລາ ໄດ້ອ່ານສານອວຍພອນວັນເດັກສາກົນຂອງທ່ານນາຍົກລັດຖະມົນຕີ ໂດຍຍົກໃຫ້ເຫັນເຖິງການພັດທະນາ ບັນດານິຕິກໍາໃນໄລຍະຜ່ານມາ ເຊິ່ງເປັນບາດກ້າວທີ່ສໍາຄັນສໍາລັບສິດທິເດັກໃນ ສປປ ລາວ ຄື: ການຫ້າມລົງໂທດທາງຮ່າງກາຍຢ່າງຄົບຊຸດ, ໄດ້ຮັບຮອງເອົາໃນວັນທີ 30 ເມສາ 2024. ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບປັບປຸງນີ້ ໄດ້ກໍານົດໃຫ້ ສປປ ລາວ ເປັນປະເທດທີ 66 ແລະ ເປັນປະເທດທໍາອິດໃນອາຊຽນ ທີ່ຫ້າມການລົງໂທດທຸກຮູບແບບ ລວມທັງ ຢູ່ເຮືອນ ແລະ ໂຮງຮຽນ. ຖະແຫລງການໄດ້ຢືນຢັນຄືນຄໍາໝັ້ນສັນຍາຂອງແຕ່ລະປະເທດໃນການສ້າງສະພາບແວດລ້ອມທີ່ປອດໄພ ແລະ ສົ່ງເສີມສິດທິຂອງເດັກທຸກຄົນ. ພ້ອມນີ້, ຍັງໄດ້ເຜີຍແຜ່ເອກະສານແນະນໍາກ່ຽວກັບການປົກປ້ອງເດັກ ແລະ ຮັກສາຄວາມປອດໄພ ສໍາລັບເດັກ ໃນຂະ ແໜງການສຶກສາ, ວິທະຍາສາດ ແລະ ກິລາ ໃຫ້ແກ່ຄູ-ອາຈານ, ຜູ້ບໍລິຫານການສຶກສາ ແລະ ນ້ອງນັກ ຮຽນ ທີ່ມາຈາກໂຮງຮຽນປະຖົມ ແລະ ມັດທະຍົມໃນນະຄອນຫລວງວຽງຈັນ ຕື່ມອີກ. ທ່ານຍັງໄດ້ເນັ້ນເຖິງບົດບາດສໍາຄັນຂອງຄູ ໃນການສ້າງສະພາບແວດລ້ອມການຮຽນຮູ້ທີ່ປອດໄພ ເຊິ່ງເອກະສານແນະນໍາການປົກປ້ອງ ແລະ ຮັກສາຄວາມປອດໄພ ສໍາລັບເດັກ ແມ່ນໝາກຜົນຂອງການຮ່ວມມືຂອງ ລັດຖະບານ ສປປ ລາວ ແລະ ອົດສະຕຣາລີ, ຄູສອນມີບົດບາດສໍາຄັນໃນການປົກປ້ອງເດັກໂດຍກົງ ພ້ອມທັງສະໜັບສະໜູນ ແລະ ສົ່ງຄວາມຮູ້ໃຫ້ແກ່ເດັກ. ພ້ອມນີ້, ການຈັດຕັ້ງປະຕິບັດ ເອກະສານແນະນໍາດັ່ງກ່າວ ຈະນໍາໄປສູ່ການປ່ຽນແປງພຶດຕິກໍາໃນທາງບວກ ເປັນການສ້າງສະຖານທີ່ ທີ່ປອດໄພ ສໍາລັບນັກຮຽນທີ່ຈະຮຽນຮູ້ ແລະ ຈະເລີນເຕີບໂຕ ໂດຍສະເພາະ ການສື່ສານທີ່ມີຄວາມເຄົາລົບກັບເດັກນ້ອຍ, ການນໍາໃຊ້ສື່ເອເລັກໂຕຣນິກຢ່າງມີຄວາມຮັບຜິດຊອບ ແລະ ປອດໄພ ແລະ ການຄຸ້ມຄອງພຶດຕິກໍາໃນທາງບວກ.
ໂອກາດນີ້ ທ່ານ ສຸພາບ ຄູນວິໄຊ ໄດ້ຮຽກຮ້ອງໃຫ້ຄູສອນທຸກຄົນ ໃຫ້ບຸລິມະສິດການປົກປ້ອງເດັກ ແລະ ໂຄສະນາຢ່າງຈິງຈັງ ເພື່ອຄວາມປອດໄພຂອງນັກຮຽນ ການປົກປ້ອງເດັກແມ່ນຄວາມຮັບຜິດຊອບຂອງທຸກຄົນ ພວກເຮົາຫວັງວ່າບັນດາຄໍາແນະນໍາດ້ານການປົກປ້ອງນີ້ ຈະສືບຕໍ່ຖືກນໍາໃຊ້ຢ່າງກວ້າງຂວາງໂດຍຄູສອນ ແລະ ທຸກຄົນທີ່ເຮັດວຽກກັບເດັກເພື່ອສ້າງສະພາບແວດລ້ອມໃນໂຮງຮຽນທີ່ປອດໄພ ແລະ ມີສ່ວນຮ່ວມ ລະບົບການສຶກສາ.
ໂອກາດດຽວກັນ ທາງຄະນະຄູ-ອາຈານ ແລະ ນັກຮຽນໄດ້ໄປຢ້ຽມຢາມ ຄະນະວິສະວະກໍາສາດ ມຊ ວິທະຍາເຂດ ໂຊກປາຫລວງ ເພື່ອເປັນການສ້າງແຮງບັນດານໃຈ ໃນການຄົ້ນຄວ້າວິທະຍາສາດ ເຕັກໂນໂລຊີ ວິສະວະກໍາ ຄະນິດສາດ (STEM) ສໍາລັບນັກຮຽນ ນີ້ເປັນສິ່ງສໍາຄັນ ໂດຍສະເພາະສໍາລັບເດັກຍິງ ກໍຄືເພດແມ່ຍິງໃນຂະແໜງການ STEM ຖືວ່າຍັງມີອັດຕາກວ່າເພດຊາຍ ຢູ່ໃນທົ່ວໂລກ.

ພາບ : ພັກສະຫວັນ ວົງໄຊຍາ



You and 13 others · 2 shares

Like · Comment · Share

| 2025-05-29 | Lao Star TV Facebook and TV |
|---|---|




| 2025-05-29 | Lao People’s Army News Facebook |
|---|---|

Lao people's Army News
May 29 at 4:03 PM

ກະຊວງສຶກສາທິການ ແລະ ກິລາແຫ່ງ ຈັດພິທີສະເຫຼີມສະຫຼອງວັນເດັກສາກົນ
https://kongthap.gov.la/?lang=lo&at=at&hide=none&page=48...

..................................................................

ໃນວັນທີ 29 ພຶດສະພາ 2025 ນີ້, ຢູ່ທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກະຊວງສຶກສາທິການ ແລະ ກິລາ ໄດ້ຈັດພິທີສະເຫຼີມສະຫຼອງວັນເດັກສາກົນ ເພື່ອແນໃສ່ຊຸກຍູ້ການປົກປ້ອງເດັກໃນດ້ານການສຶກສາ ໂດຍເນັ້ນໃສ່ຫົວຂໍ້: ການປົກປ້ອງເດັກ ແລະ ສືບຕໍ່ຊຸກຍູ້ການແນະນຳວຽກງານການປົກປ້ອງເດັກໃຫ້ແກ່ ຄູ-ອາຈານ ແລະ ຜູ້ບໍລິຫານການສຶກສາ, ໂດຍການເປັນປະທານ ຂອງທ່ານ ສຸພາບ ຄູນວິໄຊ ຮອງຫົວໜ້າຫ້ອງການ ກະຊວງສຶກສາທິການ ແລະ ກິລາ, ມີບັນດາຜູ້ຕາງໜ້າຈາກພະແນກການກະຊວງສຶກສາທິການ ແລະ ກິລາ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ ພ້ອມດ້ວຍຄູ-ອາຈານ ແລະ ນ້ອງນັກຮຽນຈາກໂຮງຮຽນປະຖົມ ແລະ ມັດທະຍົມ ເຂົ້າຮ່ວມ ຈຳນວນ 100 ກວ່າຄົນ.

ພິທີດັ່ງກ່າວ ໄດ້ຈັດຄຽງຄູ່ກັບກິດຈະກຳເຜີຍແຜ່ເອກະສານ ແລະ ຄຳຂວັນວັນເດັກສາກົນປີ 2025 ທີ່ວ່າ: "ການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກທຸກຄົນ: ສິດເທົ່າທຽມກັນ, ອະນາຄົດທີ່ປອດໄພ" ເຊິ່ງມອບໃຫ້ພະແນກເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໃນນາມກອງເລຂາ ຂອງຄະນະກຳມາທິການຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານການຊີ້ນຳ ຂອງຄະນະລັດຖະມົນຕີ. ພິທີດັ່ງກ່າວໄດ້ເລີ່ມຂຶ້ນດ້ວຍການອ່ານສານອວຍພອນວັນເດັກສາກົນຂອງທ່ານນາຍົກລັດຖະມົນຕີ ໃນຄຳປາໄສ ໄດ້ຍົກໃຫ້ເຫັນເຖິງການພັດທະນາບັນດານິຕິກຳໃນໄລຍະຜ່ານມາ ເຊິ່ງເປັນບາດກ້າວທີ່ສຳຄັນສຳລັບສິດທິເດັກໃນ ສປປ ລາວ ຄື: ການຫ້າມລົງໂທດທາງຮ່າງກາຍຢ່າງຄົບຊຸດ ໄດ້ຮັບຮອງເອົາໃນວັນທີ 30 ເມສາ 2024. ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບປັບປຸງນີ້ ໄດ້ກຳນົດໃຫ້ ສປປ ລາວ ເປັນປະເທດທີ 66 ແລະ ເປັນປະເທດທຳອິດໃນອາຊຽນ ທີ່ຫ້າມການລົງໂທດທຸກຮູບແບບ ລວມທັງຢູ່ເຮືອນ ແລະ ໂຮງຮຽນ. ຖະແຫຼງການໄດ້ຢືນຢັນຄືນຄຳໝັ້ນສັນຍາ ຂອງແຕ່ລະປະເທດໃນການສ້າງສະພາບແວດລ້ອມທີ່ປອດໄພ, ສົ່ງເສີມສິດທິຂອງເດັກທຸກຄົນ. ພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໄດ້ເຜີຍແຜ່ເອກະສານແນະນຳການປົກປ້ອງແລະ ຮັກສາຄວາມປອດໄພ ສຳລັບເດັກໃນຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ, ເຊິ່ງໄດ້ຈັດພິມໂດຍກະຊວງສຶກສາທິການ ແລະ ກິລາ ໃນປີ 2024 ໂດຍໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກລັດຖະບານປະເທດອົດສະຕຣາລີ.

ໃນໂອກາດນີ້, ຄະນະຄູຝຶກ 5 ທ່ານ ຈາກທີມງານຄູຝຶກ ຂອງກະຊວງສຶກສາທິການ ແລະ ກິລາ ໄດ້ເຜີຍແຜ່ ແລະ ຈັດວາລະຝຶກອົບຮົມ ໂດຍສຸມໃສ່ການປະຕິບັດຕົວຈິງຂອງການປົກປ້ອງເດັກໃນ ບໍລິເວນໂຮງຮຽນ ເຊັ່ນ: ການສື່ສານທີ່ມີຄວາມເຄົາລົບກັບເດັກນ້ອຍ, ການນຳໃຊ້ສື່ເອເລັກໂຕຣນິກຢ່າງມີຄວາມຮັບຜິດຊອບ ແລະ ປອດໄພ ແລະ ການຄຸ້ມຄອງພຶດຕິກຳໃນທາງບວກ. ຜູ້ເຂົ້າຮ່ວມຍັງໄດ້ຄົ້ນຄວ້າບັນດາພຶດຕິກຳທີ່ເໝາະສົມ ແລະ ບໍ່ເໝາະສົມກ່ຽວກັບການປົກປ້ອງເດັກ, ລວມທັງບັນຫາທີ່ກ່ຽວຂ້ອງກັບການຂູດຮີດທາງເພດ, ການລ່ວງລະເມີດ ແລະ ອານາຈານ, ການຖ່າຍພາບ ແລະ ການຖ່າຍຮູບເດັກນ້ອຍ ແລະ ການນຳໃຊ້ທາດເຫຼົ້າ ແລະ ສິ່ງເສບຕິດ. ການຝຶກອົບຮົມຄັ້ງນີ້ ໄດ້ຮັບການຮ່ວມມືເປັນຢ່າງດີ ແລະ ໄດ້ຮັບຜົນສຳເລັດໂດຍການມີສ່ວນຮ່ວມຂອງທຸກພາກສ່ວນ.

ໃນຕອນບ່າຍ, ນັກຮຽນໄດ້ໄປຢ້ຽມຢາມຄະນະວິສະວະກຳສາດ ເຊິ່ງນັກຮຽນໄດ້ຮັບແຮງບັນດານໃຈໃນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ, ຄະນິດສາດ (STEM) ສຳລັບເດັກຍິງ ແລະ ເດັກຊາຍ. ນີ້ເປັນສິ່ງສຳຄັນໂດຍສະເພາະສຳລັບເດັກຍິງ, ແມ່ຍິງໃນຂະແໜງການ STEM ຖືວ່າຍັງມີອັດຕ່າກວ່າຊາຍຢູ່ໃນທົ່ວໂລກ.

ໂອກາດນີ້, ທ່ານ ສຸພາພາບ ຄູນວິໄຊ ໄດ້ຮຽກຮ້ອງໃຫ້ຄູສອນທຸກຄົນຈົ່ງໃຫ້ບູລິມະສິດການປົກປ້ອງເດັກ ແລະ ໂຄສະນາເຜີຍແຜ່ຢ່າງຈິງຈັງ ເພື່ອຄວາມປອດໄພຂອງນັກຮຽນ “ການປົກປ້ອງເດັກແມ່ນຄວາມຮັບຜິດຊອບຂອງທຸກຄົນ”.
ໂດຍ: ສຸກສິງການ ຫຼ້າບຸນມີ




You, Tik Chandaraphone and 50 others · 1 share

Like · Comment · Share

| 2025-05-29 | Lao PSTV Facebook and TV |
| --- | --- |




**ຂ່າວ ປກສ LaoPSTV News 2/6/2025: ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບ ສະຖາທູດອົດສະຕຣາລີ ປະຈຳລາວ ໂດຍຜ່ານແຜນງານບີຄວາ ໄດ້ຈັດພິທີສະເຫຼີມ...**

| 2025-05-30 | Lao Youth Radio FM 90.00 MHZ Facebook |
| --- | --- |

**Lao Youth Radio FM 90.0 Mhz**
1h

ກະຊວງສຶກສາທິການ ແລະ ກິລາ ໄດ້ຈັດພິທີສະເຫຼີມສະຫຼອງວັນເດັກສາກົນ ໂດຍເນັ້ນໃສ່ຫົວຂໍ້: ການປົກປ້ອງເດັກ ແລະ ສືບຕໍ່ຊຸກຍູ້ການແນະນຳວຽກງານການປົກປ້ອງເດັກໃຫ້ແກ່ ຄູອາຈານ ແລະ ຜູ້ບໍລິຫານການສຶກສາ.

ວັນທີ 29 ພຶດສະພາ 2025 , ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ໄດ້ຈັດພິທີສະເຫຼີມສະຫຼອງວັນເດັກສາກົນ ເພື່ອແນໃສ່ຊຸກຍູ້ການປົກປ້ອງເດັກໃນດ້ານການສຶກສາ. ງານດັ່ງກ່າວໄດ້ຈັດຂຶ້ນທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ.

ພິທີສະເຫຼີມສະຫຼອງວັນເດັກສາກົນຄັ້ງນີ້ ເປັນປະທານໂດຍ ຂອງທ່ານ ສຸພາບ ຄູນວິໄຊ, ຮອງຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ, ມີບັນດາທ່ານຜູ້ຕາງໜ້າຈາກພະແນກການກະຊວງສຶກສາທິການ ແລະ ກິລາ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ, ພ້ອມດ້ວຍຄູ-ອາຈານ ແລະ ນ້ອງນັກຮຽນຈາກໂຮງຮຽນປະຖົມ ແລະ ມັດທະຍົມເຂົ້າຮ່ວມ ຈຳນວນ 100 ກວ່າຄົນ. ພິທີດັ່ງກ່າວຈະຈັດຄຽງຄູ່ກັບກິດຈະກຳເຜີຍແຜ່ເອກະສານ ແລະ ຄຳຂວັນວັນເດັກສາກົນປີ 2025 ທີ່ວ່າ" ການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກທຸກຄົນ: ສິດເທົ່າທຽມກັນ, ອະນາຄົດທີ່ປອດໄພ." ເຊິ່ງມອບໃຫ້ພະແນກເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໃນນາມກອງເລຂາ ຂອງຄະນະກຳມາທິການຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານການຊີ້ນຳຂອງຄະນະລັດຖະມົນຕີ.

ພິທີດັ່ງກ່າວໄດ້ເລີ່ມຂຶ້ນດ້ວຍການ ອ່ານສານອວຍພອນວັນເດັກສາກົນຂອງທ່ານ ນາຍົກລັດຖະມົນຕີ ໃນຄຳປາໄສ ໄດ້ຍົກໃຫ້ເຫັນເຖິງການພັດທະນາບັນດານິຕິກຳໃນໄລຍະຜ່ານມາ ເຊິ່ງເປັນບາດກ້າວທີ່ສຳຄັນສຳລັບສິດທິເດັກໃນ ສປປ ລາວ ຄື: ການຫ້າມລົງໂທດທາງຮ່າງກາຍຢ່າງຄົບຊຸດ, ໄດ້ຮັບຮອງເອົາໃນວັນທີ 30 ເມສາ 2024. ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບປັບປຸງນີ້ ໄດ້ກຳນົດໃຫ້ ສປປ ລາວ ເປັນປະເທດທີ 66 ແລະ ເປັນປະເທດທຳອິດໃນອາຊຽນ ທີ່ຫ້າມການລົງໂທດທຸກຮູບແບບ ລວມທັງ ຢູ່ເຮືອນ ແລະ ໂຮງຮຽນ. ຖະແຫຼງການໄດ້ຢືນຢັນຄືນຄຳໝັ້ນສັນຍາຂອງແຕ່ລະປະເທດໃນການສ້າງສະພາບແວດລ້ອມທີ່ປອດໄພ, ສົ່ງເສີມສິດທິຂອງເດັກທຸກຄົນ.

ໃນຕອນບ່າຍ, ນັກຮຽນໄດ້ໄປຢ້ຽມຢາມຄະນະວິສະວະກຳສາດ, ເຊິ່ງນັກຮຽນຈະໄດ້ຮັບແຮງບັນດານໃຈໃນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ, ຄະນິດສາດ (STEM) ສຳລັບເດັກຍິງ ແລະ ເດັກຊາຍ. ນີ້ເປັນສິ່ງສຳຄັນໂດຍສະເພາະສຳລັບເດັກຍິງ, ແມ່ຍິງໃນຂະແໜງການ STEM ຖືວ່າຍັງມີອັດຕາກວ່າຊາຍຢູ່ໃນທົ່ວໂລກ.

ໃນຕອນທ້າຍຂອງກອງປະຊຸມ ທ່ານ ສຸພາພາບ ຄູນວິໄຊ ໄດ້ຮຽກຮ້ອງໃຫ້ ຄູສອນທຸກຄົນຈົ່ງໃຫ້ບຸລິມະສິດການປົກປ້ອງເດັກ ແລະ ໂຄສະນາເຜີຍແຜ່ຢ່າງຈິງຈັງ ເພື່ອຄວາມປອດໄພຂອງນັກຮຽນ "ການປົກປ້ອງເດັກແມ່ນຄວາມຮັບຜິດຊອບຂອງທຸກຄົນ".



You, Lao Youth Radio FM 90.0 Mhz and 6 others · 1 share

Like · Comment · Share

| 2025-05-30 | Edu Sport Daily News Facebook |
|---|---|




| 2025-05-30 | Edu Sport TV Online Facebook and TV |
|---|---|



| 2025-05-30 | VTE 9 Facebook and TV |
| --- | --- |




| 2025-06-02 | Information Media Centre Facebook |
| --- | --- |



| | |
|---|---|
| **2025-06-04** | **Lao National Television-English Program Facebook and TV** |

**Lao National Television-English News Program**
June 4 at 1:57 PM ·

VO MoES commemorates International Children's Day with emphasis on Child Protection and Safeguarding Guidance for Educators
INTRO: The Ministry of Education and Sports ... **See more**



| 2025-06-02 | Vientiane Times Website |
|---|---|

LAO PRESS
IN FOREIGN LANGUAGES

# Vientiane Times

www.vientianetimes.org.la www.vientianetimes.la

Home About Us Lao-Web Lao-FB Eng-FB VideoClips Previous EPaper Websites Partners Advertise Subscribe Payments Log In



Children experience the excitement of virtual reality, combining fun with exposure to cutting-edge technology, during International Children's Day activities in Vientiane on May 28. The event, held at the Research Institute for Educational Sciences and supported by Australia through the BEQUAL programme, promotes child protection in education under the theme "Empowering Every Child: Equal Rights, Safe Futures".